ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ອົງກອນບໍ່ສະແຫວງຫາຜົນກຳໄລ ເຊື່ອມຊຶມວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ



ສຳນັກງານຂໍ້ມູນຕ້ານການຟອກເງິນ ທະນາຄານແຫ່ງ ສປປ ລາວ ຮ່ວມກັບກົມພັດທະນາການບໍລິຫານລັດ ກະຊວງ ພາຍໃນໄດ້ຈັດຕັ້ງການເຜີຍແຜ່ ແລະ ເຊື່ອມຊຶມວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍໃຫ້ກັບອົງກອນບໍ່ສະແຫວງຫາຜົນກຳໄລ (NPO) ຊຶ່ງມີບັນດາສະມາຄົມ, ບັນດາມູນນິທິ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມເຂົ້າ 100 ໂດຍການເປັນປະທານຂອງ ທ່ານນາງ ຂັນທະລີ ວົງໄຊຍະລາດ ຮອງຫົວໜ້າສຳນັກງານຂໍ້ມູນຕ້ານການຟອກເງິນ ຊຶ່ງຈັດຂຶ້ນໃນວັນທີ 30 ຕຸລາ 2020 ທີ່ຫ້ອງປະຊຸມສະຖາບັນການທະນາຄານ ນະຄອນຫຼວງວຽງຈັນ.

ການເຜີຍແຜ່ໃນຄັ້ງນີ້ ກໍ່ເພື່ອເຮັດໃຫ້ບັນດາສະມາຄົມ ແລະ ບັນດາມູນນິທິ ໄດ້ມີຄວາມຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບການຈັດຕັ້ງປະຕິບັດວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ; ການປະເມີນຄວາມສ່ຽງ ຕາມຫຼັກການບໍລິຫານຄວາມສ່ຽງ (RBA) ດ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ກົນໄກການປະສານງານ ລະຫວ່າງເຈົ້າໜ້າທີ່ກັບອົງການບໍ່ຫວັງຜົນກຳໄລ; ທັງເປັນການສ້າງຄວາມເຂົ້າໃຈ ແລະ ການໃຫ້ຄວາມຮ່ວມມືຈາກອົງການຄຸ້ມຄອງກໍ່ຄືກົມພັດທະນາການບໍລິຫານລັດ ກະຊວງພາຍໃນ ແລະ ຕາງໜ້າອົງການບໍ່ຫວັງຜົນກຳໄລມີຄວາມເຂົ້າໃຈໂດຍພື້ນຖານໃນວຽກງານດັ່ງກ່າວ ແລະ ເນັ້ນໃຫ້ບັນດາສະມາຄົມ ແລະ ມູນນິທິ ໄດ້ສະໜອງຂໍ້ມູນ ເພື່ອນຳໄປເຮັດການປະເມີນຕາມຫຼັກການບໍລິຫານຄວາມສ່ຽງ.

ວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍເປັນວຽກງານທີ່ມີຄວາມສຳຄັນຕໍ່ສະພາບການດຳເນີນເສດຖະກິດໃນປະເທດ; ສປປ ລາວ ກໍ່ຄືລັດຖະບານເຮົາ ໄດ້ໃຫ້ຄວາມສຳຄັນໃນວຽກງານດັ່ງກ່າວ ໂດຍໄດ້ສ້າງຕັ້ງຄະນະກຳມະການລະດັບຊາດຂຶ້ນ ໂດຍປະກອບມີຮອງນາຍົກລັດຖະມົນຕີ ເປັນປະທານ; ນອກນີ້, ປະກອບມີບັນດາລັດຖະມົນຕີ-ຮອງລັດຖະມົນຕີຈາກ 13 ກະຊວງ/ທຽບເທົ່າເຂົ້າຮ່ວມໃນຄະນະ ແນໃສ່ຈັດຕັ້ງປະຕິບັດວຽກງານດັ່ງກ່າວບົນພື້ນຖານເງື່ອນໄຂ 40 ຂໍ້ແນະນຳຂອງສາກົນທີ່ ສປປ ລາວ ເປັນພາຄີ.

ໃນໄລຍະຜ່ານມາ ສປປ ລາວ ໄດ້ຮັບການປະເມີນຜົນຮອບດ້ານຄັ້ງທຳອິດ ໃນປີ 2010 ຊຶ່ງຜົນການປະເມີນໃນຄັ້ງນັ້ນ ສປປ ລາວ ຕົກຢູ່ໃນບັນຊີເທົາ ເຮັດໃຫ້ ສປປ ລາວພົບຄວາມຫຍຸ້ງຍາກຫຼາຍດ້ານ. ເຖິງຢ່າງໃດກໍດີ, ສປປ ລາວ ໄດ້ສູ້ຊົນ, ປັບປຸງແກ້ໄຂຂໍ້ຄົງຄ້າງຕ່າງໆ ໂດຍໄດ້ອອກບັນດານິຕິກຳທີ່ຕິດພັນ ຈຳນວນ 24 ສະບັບ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານຕ້ານການຟອກເງິນ

ໃຫ້ສອດຄ່ອງຕາມມາດຖານສາກົນ, ສ້າງກົນໄກ ແລະ ຂັ້ນຕອນຕ່າງໆ ເພື່ອນຳໄປປະຕິບັດໃຫ້ເກີດປະສິດທິຜົນຕາມນິຕິກຳທີ່ວາງອອກໄດ້ຈຳນວນໜຶ່ງຈຶ່ງເຮັດໃຫ້ ສປປ ລາວ ສາມາດອອກຈາກບັນຊີເທົາຂອງສາກົນໃນປີ 2017. ຫຼັງຈາກນັ້ນ, ກໍ່ໄດ້ ມີການດຳເນີນການປະເມີນຄວາມສ່ຽງລະດັບຊາດຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍສຳເລັດໃນກາງປີ 2018 ຊຶ່ງສາມາດກຳນົດໄດ້ໄພຂົ່ມຂູ່ຂອງການຟອກເງິນ, ຂະແໜງການທຸລະກິດທີ່ມີຄວາມສ່ຽງຈະຖືກສວຍໃຊ້ໃນຂະບວນການຟອກເງິນ ແລະ ເລັ່ງແກ້ໄຂຂໍ້ຄົງຄ້າງທີ່ໄດ້ຈາກຜົນການປະເມີນ ເພື່ອປັບປຸງປະສິດທິພາບຂອງການຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ສອດຄ່ອງ ແລະ ຮັບປະກັນໄດ້ຕາມມາດຖານສາກົນຍິ່ງຂຶ້ນ.



ເພື່ອກະກຽມການປະເມີນຜົນຮອບດ້ານ ຄັ້ງທີ 2 ໃນສົກປີ 2020-2021, ລັດຖະບານໄດ້ສ້າງຕັ້ງຄະນະສະເພາະກິດຂຶ້ນ ໂດຍມີຮອງນາຍົກລັດຖະມົນຕີ, ລັດຖະມົນຕີ/ຮອງລັດຖະມົນຕີ ຈຳນວນ 25 ທ່ານປະກອບຢູ່ໃນຄະນະກຳມະການ ແລະ ໄດ້ແບ່ງອອກເປັນ 4 ກຸ່ມວຽກຄື: ວຽກງານເຜີຍແຜ່ ແລະ ເຊື່ອມຊຶມ, ວຽກງານນິຕິກຳ ແລະ ກົນໄກ, ວຽກງານຄຸ້ມຄອງ ແລະ ວຽກງານການດຳເນີນຄະດີ. ໃນນັ້ນ, ສຳລັບກຸ່ມວຽກງານເຜີຍແຜ່ ແລະ ເຊື່ອມຊຶມ ລວມມີຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ, ສຳນັກງານນາຍົກລັດຖະມົນຕີ, ກະຊວງການເງິນ, ກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ແລະ ກົມກອງທີ່ກ່ຽວຂ້ອງປະກອບຢູ່ໃນຄະນະ ຊຶ່ງມີສຳນັກງານຂໍ້ມູນຕ້ານການຟອກເງິນ ເປັນກອງເລຂາທີ່ເຮັດວຽກໃນການປະສານງານ ແລະ ມາຮອດປະຈຸບັນ 4 ກຸ່ມວຽກດັ່ງກ່າວໄດ້ດຳເນີນການຕາມພາລະບົດບາດ, ໜ້າທີ່ຂອງຕົນຢ່າງເປັນເຈົ້າການ, ມີຄວາມຮັບຜິດຊອບສູງ ແລະ ມີຜົນຄືບໜ້າດີຂຶ້ນຕາມລຳດັບ; ສະນັ້ນ, ເພື່ອເພີ່ມທະວີວຽກງານດັ່ງກ່າວໃນລະດັບສູງ ມັນຈຶ່ງເລັ່ງທວງໃຫ້ອົງກອນບໍ່ສະແຫວງຫາຜົນກຳໄລ (NPO) ໂດຍມີບັນດາສະມາຄົມ ແລະ ບັນດາມູນນິທິເຂົ້າຮ່ວມຢ່າງຂະຫຍັນຂັນແຂງ ໂດຍຕ້ອງສະໜອງຂໍ້ມູນຕົວຈິງກ່ຽວກັບວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍທີ່ຕິດພັນກັບອົງກອນຫຼືໜ່ວຍງານຂອງຕົນໃຫ້ສຳນັກງານຂໍ້ມູນຕ້ານການຟອກເງິນ ແລະພາກສ່ວນກ່ຽວຂ້ອງຮັບຮູ້ໂດຍດ່ວນ ເພື່ອຈະໄດ້ນຳເອົາພວກ ຫຼື ຜູ້ກະທຳຜິດເຂົ້າສູ່ຂະບວນການຍຸຕິທຳຕາມລະບຽບກົດໝາຍຂອງ ສປປ ລາວ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

# ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ